**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
ຫ້ອງການ ຄຊກລ

ເລກທີ 806/ຫຄຊກລ.ຄພ.

ນະຄອນຫລວງວຽງຈັນ, ວັນທີ 21 ກັນຍາ 2023.

**ບົດລາຍງານຜົນຂອງການລົງຕິດຕາມກວດກາການເຄື່ອນໄຫວວຽກງານເກັບກູ້ລະເບີດຂອງ**

**ອົງການ ແມັກລາວ ປະຈຳ ແຂວງ ຊຽງຂວາງ, ໄລຍະທີ 03.**

## I. ພາກສະເໜີ.

ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າຫ້ອງການສະບັບເລກທີ 750/ຫຄຊກລ. ລົງວັນ 07/09/2023 ວ່າດ້ວຍການແຕ່ງຕັ້ງໜ່ວຍງານມາດຕະຖານ ແລະ ຄໍ້າປະກັນຄຸນນະພາບ ລົງຕິດຕາມກວດກາ ການປະຕິບັດງານ ອົງການແມັກ ປະຈຳແຂວງ ຊຽງຂວາງ. ເລີ່ມແຕ່ວັນທີ່ 09 ຫາ 18 ກັນຍາ 2023 ໂດຍມີຫົວໜ້າຝ່າຍປະຕິບັດງານ ຂັ້ນແຂວງ ໄດ້ດຳເນີນການເຄື່ອນໄຫວຕິດຕາມການຈັດຕັ້ງປະຕິບັດວຽກງານ ການເກັບກູ້, ສຳຫຼວດດ້ານວິຊາການ ແລະ ທຳລາຍລະເບີດ.

- **ຄະນະທີມງານກວດກາມີລາຍຊື່ດັ່ງລຸ່ມນີ້:**

1. ທ່ານ ບຸນຮຽງ ສຸກຈັນທະລາວົງ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ.
2. ທ່ານ ໄລທອງ ຈັນທາທິລາດ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ.
3. ທ່ານ ໜູພິດ ໄຊຊະນະ ວິຊາການຄຸ້ມຄອງຄຸນນະພາບ/ຂັບລົດ ຫ້ອງການ ຄຊກລ.
4. ທ່ານ ສອນໄຊ ພົມມະທຳ ວິຊາການ/ແພດໜ່ວຍງານຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ.
5. ທ່ານ ຂັນທະລີ ວຽນທະສົງ ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ.
6. ທ່ານ ອຸດາພອນ ສໍສະຫ້ອນ ຫົວໜ້າຫ້ອງການ ຄຄກລຂ
7. ທ່ານ ບຸນເຮືອງ ແສງທຸມມີ ວິຊາການ ຫ້ອງການ ຄຄກລຂ.

**ພາກສ່ວນອົງການແມັກມີຄື :**

1. ທ່ານ ນ. ແມັກມະນີ ມັງໜໍ່ເມກ ຫົວໜ້າຝ່າຍປະຕິບັດງານຂັ້ນແຂວງ ອົງການເກັບກູ້ລະເບີດແມັກ.
2. ທ່ານ ພົມພອນ ບຸນທອງລາ ຫົວໜ້າຝ່າຍປະຕິບັດງານຂັ້ນແຂວງ ອົງການເກັບກູ້ລະເບີດແມັກ.
3. ທ່ານ ນ. ພຸດທະສອນ ນວນທະບຸດ ຫົວໜ້າຝ່າຍປະຕິບັດງານຂັ້ນແຂວງ ອົງການເກັບກູ້ລະເບີດແມັກ.
4. ທ່ານ ວົງວິໄລ ຫົວໜ້າທີມງານຄວບຄຸມຄຸນນະພາບ.
5. ທ່ານ ນ. ບົວລະພາ ອິນທະວົງສາ ຜູ້ປະສານງານທາງດ້ານການແພດ.

## II. ຈຸດປະສົງ.

ຕິດຕາມກວດກາການປະຕິບັດງານ ແມ່ນເນັ້ນໃສ່ກວດກາດ້ານວິຊາການເກັບກູ້ ລບຕ ຂອງນັກວິຊາການ, ການບໍລິຫານຄຸ້ມຄອງບັນຊາ, ພ້ອມກັນນັ້ນກໍ່ເປັນການສັງເກດທາງດ້ານເຕັກນິກການປະຕິບັດສຳຫຼວດ, ເກັບກູ້, ທຳລາຍ ລບຕ ໃຫ້ມີປະສິດທິພາບສູງ, ມີຄວາມປອດໄພກວ່າເກົ່າ ແລະ ເພື່ອຊຸກຍູ້, ປັງປຸງການປະຕິບັດງານ, ຕິດຕາມ

ຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນ ແລະ ຄວບຄຸມໃຫ້ເຂົ້າສູ່ລະບົບເປັນເອກະພາບກັນໃນມາດຕະຖານອັນດຽວກັນ.

## III. ພາກສ່ວນຫ້ອງການ.

- ຈຳນວນພະນັກງານ ແລະ ຄຸນວຸດທິຂອງພະນັກງານອົງການ ແມັກ ປັດຈຸບັນປະກອບມີພະນັກງານທັງໝົດຈຳນວນ: 914 ຄົນ, ຍິງ 318 ຄົນ, ໃນນີ້ມີພະນັກງານຝ່າຍສະໜັບສະໜູນ 22 ຄົນ, ຍິງ 06 ຄົນ ພະນັກງານປະຕິບັດງານພາກສະໜາມມີ 849 ຄົນ, ຍິງ 300 ຄົນ, ແລະ ມີຊ່ຽວຊານຕ່າງປະເທດ 06 ຄົນ, ຍິງ 01 ຄົນ, ເຊິ່ງປະກອບທີມງານມີຄື:
- ທີມງານໂຄສະນາສຶກສາຄວາມສ່ຽງ ມີຈຳນວນ 04 ທີມ.
- ທີມງານສຳຫຼວດບໍ່ແມ່ນດ້ານວິຊາການ 21 ທີມ.
- ທີມງານສຳຫຼວດທາງດ້ານວິຊາການຈຳນວນ 15 ທີມ.
- ທີມງານກວດກູ້ພື້ນທີ່ ມີ 37 ທີມ.
- ທີມງານກວດສອບຄຸນນະພາບ 05 ທີມ.
- ທີມງານທຳລາຍລະເບີດເຄື່ອນທີ່ມີ 04 ທີມ.

ອົງການເກັບກູ້ລະເບີດແມັກລາວ ປະຈຳແຂວງຊຽງຂວາງ ໄດ້ຮັບທຶນສະໜັບສະໜູນ ຈາກກະຊວງການຕ່າງປະເທດສະຫະລັດອາເມລິກາ (WRA) ການເຄື່ອນໄຫວວຽກງານສຳຫຼວດກວດກູ້ ແລະ ທຳລາຍລະເບີດຢູ່ 07 ເມືອງຄື: ເມືອງ ແປກ, ເມືອງ ໜອກ, ເມືອງ ພູກູດ, ເມືອງ ຜາໄຊ, ເມືອງ ຄູນ, ເມືອງ ຄຳ, ແລະ ເມືອງ ໜອງແຮດ, ໃນແຜນປີໄລຍະທີ III, 2023 ມີເນື້ອທີ່ກວດກູ້ທັງໝົດ 11,129,600 ຕາແມັດ ແລະ ສຳຫຼວດທາງດ້ານວິຊາການຕາມແຜນປີແມ່ນ 85,500,000 ຕາແມັດ.

**ກິດຈະກຳ ແລະ ຄວາມຄືບໜ້າແຕ່ລະໜ້າວຽກຕາມແຜນປີ2023 ຄື:**

- ກິດຈະກຳໂຄສະນາສຶກສາຄວາມສ່ຽງ (MRE) ຕາມແຜນປີ 2023 ແມ່ນ 48 ບ້ານ, ຈັດຕັ້ງປະຕິບັດແຕ່ເດືອນ ມັງກອນ ຫາ ເດືອນ ມິຖຸນາ, ສາມາດຈັດຕັ້ງປະຕິບັດໄດ້ 25 ບ້ານ, ຈຳນວນ 144 ຄັ້ງ, ຖ້າທຽບໃສ່ (MOU) ແມ່ນສຳເລັດເທົ່າກັບ 51%. ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ ຈຳນວນ 3,741 ຄົນ , ຍິງ 1,887 ຄົນ ແລະ ຊາຍ 1,854 ຄົນ.
- ກິດຈະກຳສຳຫຼວດທີ່ບໍ່ແມ່ນດ້ານວິຊາການ (NTS) ຕາມແຜນປີ 2023 ແມ່ນ 56 ບ້ານ, ຈັດຕັ້ງປະຕິບັດແຕ່ເດືອນ ມັງກອນ ຫາ ເດືອນ ມິຖຸນາ, ສາມາດຈັດຕັ້ງປະຕິບັດໄດ້ 24 ບ້ານ, ຖ້າທຽບໃສ່ (MOU) ແມ່ນສຳເລັດເທົ່າກັບ 50%. ປະຊາຊົນລາຍງານລະເບີດຈຳນວນ 20 ຈຸດຫຼັກຖານ, ພົບລບຕ ຕົວຈິງຈຳນວນ 57 ໜ່ວຍ, ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 320 ຄົນ.
- ວຽກງານສຳຫຼວດທາງດ້ານວິຊາການ (TS) ຈັດຕັ້ງປະຕິບັດໄດ້ແຕ່ເດືອນ ມັງກອນ ຫາ ເດືອນ ມິຖຸນາ ຕາມແຜນປີ 2023 ແມ່ນ 85,500,00 ຕາແມັດ, ສຳຫຼວດພື້ນທີ່ໄດ້ 64,500,000 ຕາແມັດ, ສາມາດກຳນົດເປັນພື້ນທີ່ຢືນຢັນອັນຕະລາຍ (CHA) ໄດ້ 61,855,468 ຕາແມັດ, ທຳລາຍລະເບີດທີ່ສຳຫຼວດພົບຈຳນວນ 2,312 ລູກ, ບົມບີ້ 2,289 ໜ່ວຍ, ສຳພາວຸດອື່ນໆ 23 ລູກ, ທຽບໃສ່ແຜນປີເທົ່າກັບ 32,11%.

- ວຽກງານກວດກູ້ຕາມພື້ນທີ່ (AC) ຄາດໝາຍສູ້ຊົນຂອງໂຄງການ 27,239,800 ຕາແມັດ, ຈັດຕັ້ງປະຕິບັດໄດ້ແຕ່ເດືອນ ມັງກອນ ຫາ ເດືອນ ມິຖຸນາ 2023 ຕາມແຜນປີໄລຍະທີ່ 03 ແມ່ນ 11,129,600 ຕາແມັດ,ກວດກູ້ເນື້ອທີ່ໄດ້ 5,623,461 ຕາແມັດ, ຈັດຕັ້ງປະຕິບັດໄດ້ເທົ່າກັບ 50,53%, ສາມາດທຳລາຍລະເບີດໄດ້ຈຳນວນທັງໝົດ 1,026 ລູກ, ປະເພດບົມບີ້ 988 ໜ່ວຍ, ສາພາວຸດຈຳນວນ 38 ລູກ, ຜູ້ໄດ້ຮັບຜົນປະໂຫຍດທາງກົງ 4,480 ຄົນ,ທາງອ້ອມໄດ້ທັງໝົດ 20,830 ຄົນ.
- ວຽກງານທຳລາຍເຄື່ອນທີ່ຕາມປະຊາຊົນລາຍງານໄດ້ 1,473 ຄັ້ງ, ທຳລາຍລະເບີດໄດ້ທັງໝົດ 3,783 ໜ່ວຍ, ບົມບີ້ 2,770 ໜ່ວຍ, ມີນ 08 ໜ່ວຍ, ສຳພາວຸດອື່ນໆ 1,005 ລູກ, ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 14,716 ຄົນ.

## IV. ລົງຕິດຕາມກວດກາພາກສະໜາມ.

- ລົງຕິດຕາມກວດກາທີມງານກວດກູ້ລະເບີດ (AC 30) ບ້ານ ພູເກັງ ເມືອງ ແປກ, ແຂວງ ຊຽງຂວາງ ລະຫັດໜ້າວຽກ Task ID : MAG_AC_2023_0901999_209 ມີພະນັກງານທັງໝົດ 11 ຄົນ ຫົວໜ້າທີມ 01 ຄົນ, ຮອງທີມ 01 ຄົນ, ວິຊາການ 07 ຄົນ, ແພດສະໜາມ 01 ຄົນ, ຂັບລົດ 01 ຄົນ, ວັນທີ່ເລີ່ມຕົ້ນ 30/08/2023 ຄາດວ່າຈະສຳເລັດວັນທີ່ 07/10/2023 ມີເນື້ອທີ່ທັງໝົດ 69,375 ຕາແມັດ, ກວດກູ້ໄດ້ແລ້ວ 25,369 ຕາແມັດ, ກວດພົບລະເບີດປະເພດບົມບີ້ blu 26 ຈຳນວນ 03 ໜ່ວຍ, blu 63 ຈຳນວນ 09 ໜ່ວຍ, ສະໜາມດັ່ງກ່າວທາງທີມງານຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ ຍັງໄດ້ຕິດຕາມກວດກາແຜນຮັບມືອຸປະຕິເຫດປະຈຳສະໜາມ, ປະເມີນແພດສະໜາມ, ການຄວບຄຸມບັນຊາຂອງຫົວໜ້າທີມ, ຜ່ານການຕິດຕາມກວດກາຍັງເຫັນວ່າ, ແພດສະໜາມການຊ່ວຍເຫຼືອຄົນເຈັບຍັງບໍ່ທັນຖືກຂັ້ນຕອນ ແລະ ຫົວໜ້າທີມງານກວດກກູ້ເວລາອຸປະຕິເຫດເກີດຂຶ້ນແມ່ນບໍ່ໄດ້ສັ່ງອ້າຍນ້ອງຮັກສາສະໜາມທີ່ຕົນເອງຮັບຜິດຊອບ.
- ລົງຕິດຕາມກວດກາທີມງານສຳຫຼວດທາງດ້ານວິຊາການ (TS 001) ບ້ານ ຄັງຍາວ ເມືອງ ແປກ ແຂວງ ຊຽງຂວາງ, Task ID : MAG_TS_2023_0901050_097 ວັນທີເລີ່ມຕົ້ນ 16/08/2023 ສາມາດສຳຫຼວດເນື້ອທີ່ໄດ້ 377,500 ຕາແມັດ, ສາມາດກຳນົດບ້ອກສີແດງໄດ້ 21 ບ້ອກ, ຂຽວ 100 ບ້ອກ, ເຫຼືອງ 29 ບ້ອກ, ເທົາ 40 ບ້ອກ, ຂາວ 157 ບ້ອກ, ລວມທັງໝົດ 348 ບ້ອກ, ສຳຫຼວດພົບລະເບີດທັງໝົດ 22 ໜ່ວຍ, ປະເພດບົມບີ້ (blu 26) ຈຳນວນ 18 ໜ່ວຍ, (blu 63) ຈຳນວນ 03 ໜ່ວຍ, ແລະ ລູກປືນໃຫ່ຍ 57 ມມ 01 ລູກ.
- ລົງສະໜາມຕິດຕາມທີມງານທຳລາຍເຄື່ອນທີ່ (RT79) ບ້ານ ໂພນ ເມືອງ ຜາໄຊ ແຂວງ ຊຽງຂວາງ, ທຳລາຍລະເບີດລູກຫວ່ານປະເພດ (blu 3b) ຈຳນວນ 01 ໜ່ວຍ, ຈຸດພິກັດ (UTM 48Q) 300882-2129813, ການທຳລາຍແມ່ນມີຄວາມປອດໄພ.

**ລົງຄວບຄຸມຄຸນນະພາບສະໜາມທີ່ກວດກູ້ສຳເລັດແລ້ວ ຈຳນວນ 11 ສະໜາມຄື:**

1. ລະຫັດໜ້າວຽກ Task ID: MAG_AC_2023_0906017_078, Area = 68,503 $m^2$, NRA_QC 2,% = 2,000 $m^2$ ( 20 x 50) x 2 boxs.
2. ລະຫັດໜ້າວຽກ Task ID: MAG_AC-2023_0901055_155, Area = 62,558 $m^2$, NRA_QC 2,% = 1,800 $m^2$ ( 30 x 30) x 2 boxs.

3. ລະຫັດໜ້າວຽກ Task ID: MAG_AC_2023_0901112_158, Area = 54,333 m², NRA_QC 2,% = 1,200 m² ( 20 x 30) x 2 boxs.
4. ລະຫັດໜ້າວຽກ Task ID: MAG_AC_2023_0907024_154, Area = 20,000 m², NRA_QC 2,% = 625 m² ( 25 x 25) x 1 boxs.
5. ລະຫັດໜ້າວຽກ Task ID: MAG_AC_2023_0901043_189, Area = 54,571 m², NRA_QC 2,% = 1,825 m² ( 25 x 25_30x40) x 2 boxs.
6. ລະຫັດໜ້າວຽກ Task ID: MAG_AC_2023_0901043_172, Area = 44,772 m², NRA_QC 2,% = 1,000 m² ( 20 x 50) x 1 boxs.
7. ລະຫັດໜ້າວຽກ Task ID: MAG_AC_2023_0901112_168, Area = 41,204 m², NRA_QC 2,% = 1,000 m² ( 20 x 50) x 1 boxs.
8. ລະຫັດໜ້າວຽກ Task ID: MAG_AC_2023_0901999_191, Area = 69,785 m², NRA_QC 2,% = 1,800 m² ( 30 x 30) x 2 boxs.
9. ລະຫັດໜ້າວຽກ Task ID: MAG_AC_2023_0901065_183, Area = 39,725 m², NRA_QC 2,% = 1,000 m² ( 20 x 50) x 1 boxs.
10. ລະຫັດໜ້າວຽກ Task ID: MAG_AC_2023_0901065_184, Area = 48,303 m², NRA_QC 2,% = 1,000 m² ( 20 x 50) x 1 boxs.
11. ລະຫັດໜ້າວຽກ Task ID: MAG_AC_2023_0901074_164, Area = 51,782 m², NRA_QC 2,% = 1,200 m² ( 20 x 30) x 2 boxs.

ຜ່ານການກວດກາຂອງທີມງານກວດກາຄຸນນະພາບຫ້ອງການ ຄຊກລ ຈຳນວນ 11 ສະໜາມ, ເຊິ່ງມີເນື້ອທີ່ລວມທັງໝົດ 555,536 ມ², ທີມງານກວດກາຄຸນນະພາບຫ້ອງການ ຄຊກລ ໄດ້ສ້າງບ໋ອກຄວບຄຸມຄຸນນະພາບທັງໝົດ 17 ຈຸດ, ເຊິ່ງມີເນື້ອທີ່ຄວບຄຸມຄຸນນະພາບໄດ້ 14,425 ມ², ສະເລ່ຍເປັນເປີເຊັນເທົ່າກັບ 28,1% ທັງ 11 ສະໜາມດັ່ງກ່າວກໍ່ເຫັນວ່າມີຄວາມປອດໄພ ບໍ່ພົບສິ້ນສ່ວນສະເກັດທີ່ໃຫຍ່ກວ່າມາດຕະຖານແຫ່ງຊາດທີ່ໄດ້ກຳນົດໄວ້ ເຄິ່ງໜຶ່ງຂອງບົ່ມບີ້ blu26(1/2 blu 26).

## V. ຜົນໄດ້ຮັບ

- ກວດກາລະບົບເອກະສານ, ການສະໜັບສະໜູນ, ການບັນຊາ ແລະ ລະບົບການປັກໝາຍສະໜາມ ອົງການເກັບກູ້ລະເບີດແມັກລາວ ແຂວງຊຽງຂວາງ ມີລະບົບເອກະສານ, ການຄຸ້ມຄອງຂໍ້ມູນຂ່າວສານຢ່າງເປັນລະບົບເຊັ່ນ : ບົດລາຍງານການສຳຫຼວດຂັ້ນສອງ, ບົດລາຍງານຜົນສຳເລັດຂັ້ນສາມ, ແບບຟອມຄວບຄຸມຄຸນນະພາບພາຍໃນ, ປຶ້ມບັນທຶກປະຈຳວັນ, ແບບຟອມລາຍງານລະເບີດທີ່ບໍ່ສາມາດຊີ້ແຈ້ງໄດ້, ແຜນຮອງຮັບອຸປະຕິເຫດໝວດເລືອດຂອງພະນັກງານ ແລະ ເອກະສານອື່ນໆເຫັນວ່າຄົບຖ້ວນຕາມມາດຕະຖານການປະຕິບັດງານທີ່ໄດ້ກຳນົດໄວ້.
- ການປະຕິບັດງານຂອງອົງການແມັກລາວ ແຂວງ ຊຽງຂວາງ ໃນການເຄື່ອນໄຫວວຽກງານເກັບກູ້ ລບຕ ແມ່ນປະຕິບັດຕາມມາດຕະຖານການປະຕິບັດງານ, ທີ່ສອດຄ່ອງກັບມາດຕະຖານແຫ່ງຊາດ, ເປັນຕົ້ນແມ່ນ ການສະໜັບສະໜູນທາງດ້ານການແພດ, ການບັນຊາສະໜາມ, ການສື່ສານ, ລະບົບການປັກໝາຍສະໜາມກວດກູ້, ພາຫະນະນຳສົ່ງຄົນເຈັບ, ການເກັບກູ້ລະເບີດໄດ້ປະຕິບັດຕາມລະບຽບ ແລະ ຂັ້ນຕອນການກວດກູ້ ກ່ອນການລົງປະຕິບັດວຽກໃນແຕ່ລະມື້ໄດ້ມີການທົດສອບເຄື່ອງກວດລະເບີດ

ເປົ້າໝາຍ blu 26 ເຄິ່ງໜ່ວຍ, ໃນຄວາມເລິກ 25 ຊັງຕີແມັດ, ນຳໃຊ້ເຄື່ອງກວດຫາລະເບີດ 2 ຊະນິດຄື: Vallon VMX-10 ແລະ Vallon VMH-4.

## VI. ພາກສະຫຼຸບ

ຜ່ານການຕິດຕາມກວດກາຂອງທີມງານກວດກາຄຸນນະພາບຫ້ອງການ ຄຊກລ ສະຫຼຸບໄດ້ດັ່ງນີ້:

1. ຫົວໜ້າທີມງານພາກສະໜາມ ເວລາປະເມີນແຜນຮັບມືອຸປະຕິເຫດປະຈຳສະໜາມ, ການຄວບຄຸມບັນຊາ, ຍັງກຳນົດຮຽນບໍ່ທັນໄດ້ດີ
2. ແນະນຳຜູ້ຊ່ວຍແພດ ໃນການຊ່ວຍເຫຼືອຄົນເຈັບ ຍັງບໍ່ທັນຖືກຕາມ ຂັ້ນຕອນ

ຜ່ານການກວດກາ ແລະ ຄວບຄຸມຄຸນນະພາບທັງໝົດຈຳນວນ 11 ສະໜາມກໍ່ເຫັນວ່າພື້ນທີ່ດັ່ງກ່າວແມ່ນມີຄວາມປອດໄພ ບໍ່ພົບສິ້ນສ່ວນສະເກັດທີ່ໃຫ່ຍກວ່າມາດຕະຖານແຫ່ງຊາດທີ່ໄດ້ກຳນົດໄວ້ເຄິ່ງໜຶ່ງຂອງບົມບີ້ blu 26 (½ blu 26).

ຜ່ານການຕິດຕາມ ແລະ ກວດກາການປະຕິບັດງານເກັບກູ້ ອົງການແມັກລາວ ແຂວງ ຊຽງຂວາງ ເຫັນວ່າດ້ານວິຊາການແມ່ນປະຕິບັດຖືກຕ້ອງຕາມທີ່ກຳນົດໃນມາດຕະຖານປະຕິບັດງານ (SOP) ຂອງອົງການ ແລະ ສອດຄ່ອງກັບມາດຕະຖານແຫ່ງຊາດທີ່ໄດ້ກຳນົດໄວ້.

ສະນັ້ນ, ຈຶ່ງລາຍງານມາຍັງທ່ານເພື່ອຊາບ.

| | |
|---|---|
| **ຫົວໜ້າຫ້ອງການ ຄຊກລ** | **ຫົວໜ້າໜ່ວຍງານ ຄຸ້ມຄອງຄຸນນະພາບ** |
| ດວງສີ ທຳມະວົງ | |

ບ່ອນນຳສົ່ງ:

-ອົງການກຸ່ມປຶກສາເກັບກູ້ລະເບີດ ແມັກລາວ ວຽງຈັນ 1 ສະບັບເພື່ອຊາບ

-ອົງການແມັກລາວ ແຂວງຊຽງຂວາງ 1 ສະບັບເພື່ອຈັດຕັ້ງປະຕິບັດ

- ຫ້ອງການ ຫຄຊກລ ເກັບມ້ຽນ 1 ສະບັບ
- ຫ້ອງການ ຄຄກລຂ ຊຽງຂວາງ 1 ສະບັບເພື່ອຊາບ

ບ້ານ ທົ່ງສ້າງນາງ, ເມືອງ ຈັນທະບູລີ, ນະຄອນຫຼວງ, ຕູ້ປນ: 7261, ໂທລະສັບ: 856 21 262416, 262 386, ແຟັກ: 856 21 262 386,
ອີເມວ: uxo.nra@gmail.com ເວັບໄຊທ໌: www.nra.gov.la